ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------

ກະຊວງພາຍໃນ

ເລກທີ ໖໓໓ /ພນ

ນະຄອນຫລວງວຽງຈັນ, ວັນທີ 14 /ມິ.ຍ 2012

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງການຍົກຍ້າຍຂອງພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍທະບຽນຄອບຄົວ ສະບັບເລກທີ 12 / ສພຊ, ລົງວັນທີ 27 ພະຈິກ 2009;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 253 / ພນ, ລົງວັນທີ 19 ສິງຫາ 2011 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ.

## ລັດຖະມົນຕີວ່າການກະຊວງພາຍໃນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຍົກຍ້າຍຂອງພົນລະເມືອງ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນປະຕິບັດໃຫ້ເປັນເອກະພາບ ແນໃສ່ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 2. ຄວາມໝາຍຂອງຄຳສັບ**

ຂໍ້ຕົກລົງສະບັບນີ້ໄດ້ກຳນົດຄວາມໝາຍຂອງຄຳສັບດັ່ງນີ້:

2.1 ການຍົກຍ້າຍຂອງພົນລະເມືອງ ໝາຍເຖິງການປ່ຽນແປງທີ່ຢູ່ອາໄສເດີມຂອງບຸກຄົນ ຫລື ຄອບຄົວເພື່ອໄປຕັ້ງພູມລຳເນົາ ແລະ ດຳລົງຊີວິດຢູ່ບ່ອນອື່ນໂດຍໄດ້ຮັບການອະນຸຍາດຈາກອົງການທີ່ກ່ຽວຂ້ອງຖືກຕ້ອງຕາມລະບຽບກົດໝາຍ;

2.2 ການຍົກຍ້າຍດ້ວຍເຫດຜົນສ່ວນຕົວ ໝາຍເຖິງບຸກຄົນຫຼືຄອບຄົວເປັນຜູ້ສະເໜີຍົກຍ້າຍໄປເອງ;

2.3 ການຍົກຍ້າຍຕາມການຈັດສັນຂອງລັດ ໝາຍເຖິງການຍົກຍ້າຍຈາກບ່ອນຢູ່ເດີມ ເພື່ອໄປດຳລົງຊີວິດຢູ່ບ່ອນອື່ນ ຕາມການຈັດສັນທີ່ຢູ່ ແລະ ບ່ອນທຳການຜະລິດ ຫລື ຍົກຍ້າຍ ຍ້ອນຖືກຜົນກະທົບຈາກໂຄງການພັດທະນາເສດຖະກິດ-ສັງຄົມ ທີ່ນອນຢູ່ໃນແຜນຂອງລັດຖະບານ.

**ມາດຕາ 3. ຫລັກການຄຸ້ມຄອງການຍົກຍ້າຍ**

3.1 ຮັບປະກັນສິດສະເໝີພາບ, ເສລີພາບ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

3.2 ມີຄວາມຍຸຕິທຳ ແລະ ມະນຸດສະທຳ;

3.3 ຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງໃນການດຳລົງຊີວິດ;

3.4 ຮັບປະກັນບ່ອນຢູ່, ບ່ອນທຳການຜະລິດ,ໃຫ້ຄຳແນະນຳ ແລະ ການບໍລິການທັນເວລາຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ຮັບໃຊ້ທົ່ວໄປ, ໃນຕໍ່ໜ້ານີ້ຈະສຸມໃສ່ປະຕິບັດນະໂຍບາຍ ກ່ຽວກັບສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.

## ໝວດທີ 2
## ເງື່ອນໄຂການຍົກຍ້າຍ ແລະການບໍ່ອະນຸຍາດໃຫ້ຍົກຍ້າຍ

**ມາດຕາ 5. ເງື່ອນໄຂການຍົກຍ້າຍ**

ການຍົກຍ້າຍຂອງພົນລະເມືອງໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:

5.1 ຕ້ອງປະກອບເອກະສານຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

5.2 ຕ້ອງແມ່ນພົນລະເມືອງລາວ,ຄົນຕ່າງດ້າວ ແລະຄົນບໍ່ມີສັນຊາດມີທີ່ຢູ່ຖາວອນໃນ ສປປ ລາວ;

5.3 ຕ້ອງບໍ່ແມ່ນບຸກຄົນ ຫລື ຄອບຄົວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້;

5.4 ຕ້ອງມີໃບຢັ້ງຢືນຮັບປະກັນບ່ອນທີ່ຈະໄປຢູ່ໃໝ່.

**ມາດຕາ 6. ການບໍ່ອະນຸຍາດໃຫ້ຍົກຍ້າຍ**

6.1 ບຸກຄົນທີ່ຖືກຈຳກັດທີ່ຢູ່ຕາມຄຳສັ່ງຂອງສານປະຊາຊົນ ຫລື ບຸກຄົນທີ່ຖືກສານປະຊາຊົນຕັດສິນລົງໂທດຈຳກັດທີ່ຢູ່;

6.2 ປະກອບເອກະສານການຍົກຍ້າຍບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;

6.3 ບຸກຄົນ ຫລື ຄອບຄົວທີ່ເປັນພະຍາດຕິດແປດ ຊຶ່ງທາງການແພດພວມຕິດຕາມ, ປິ່ນປົວ ແລະຫ້າມບໍ່ໃຫ້ເຄື່ອນຍ້າຍໄປຢູ່ບ່ອນອື່ນ.

# ໝວດທີ 3
# ຂັ້ນຕອນການຂໍຍົກຍ້າຍ

ມາດຕາ 7. ຂັ້ນຕອນການຂໍຍົກຍ້າຍ

7.1 ການຂໍຍົກຍ້າຍບ້ານຕໍ່ບ້ານພາຍໃນເມືອງດຽວກັນ

- ບຸກຄົນ ຫຼື ຄອບຄົວ ຜູ້ທີ່ຈະຍົກຍ້າຍ ຕ້ອງຂຽນຄໍາຮ້ອງຍື່ນຕໍ່ອົງການປົກຄອງບ້ານບ່ອນທີ່ຈະໄປຢູ່ໃໝ່ ໂດຍຜ່ານການຢັ້ງຢືນຈາກອົງການປົກຄອງບ້ານບ່ອນຢູ່ເດີມເສຍກ່ອນ;
- ພາຍຫລັງໄດ້ຮັບເອກະສານຄໍາຮ້ອງຂອງບຸກຄົນ ຫລື ຄອບຄົວແລ້ວ ອົງການປົກຄອງບ້ານບ່ອນທີ່ຈະໄປຢູ່ໃໝ່ ຄົ້ນຄ້ວາ ແລະ ມີຄໍາເຫັນຕອບຮັບ ຫຼື ບໍ່ຮັບພາຍໃນ 03 ວັນລັດຖະການ (ນັບແຕ່ວັນໄດ້ຮັບຄໍາຮ້ອງ), ຫຼັງຈາກໄດ້ການຢັ້ງຢືນຮັບເອົາຈາກບ້ານບ່ອນທີ່ຈະໄປຢູ່ໃໝ່ແລ້ວ ຈຶ່ງມາປະກອບເອກະສານການຍົກຍ້າຍຍື່ນຕໍ່ອົງການປົກຄອງບ້ານບ່ອນທີ່ຕົນຢູ່ເດີມ;
- ເມື່ອໄດ້ຮັບການອະນຸຍາດຍົກຍ້າຍຈາກນາຍບ້ານເດີມທີ່ຕົນຢູ່ແລ້ວ ກໍ່ສາມາດຍົກຍ້າຍໄດ້ອົງການປົກຄອງບ້ານບ່ອນຢູ່ໃໝ່ ຕ້ອງລາຍງານໃຫ້ຫ້ອງການພາຍໃນເມືອງຊາບແລ້ວ ຫ້ອງການພາຍໃນເມືອງກໍຕ້ອງແຈ້ງໃຫ້ ປກສ ເມືອງຊາບ ພາຍໃນກໍານົດເວລາ 03 ວັນ ເພື່ອປຽນແປງສໍາມະໂນຄົວເຂົ້າໃນສໍານວນສໍາມະໂນຄົວ ຂອງບ້ານທີ່ຍົກຍ້າຍໄປຢູ່ໃໝ່.

7.2 ການຂໍຍົກຍ້າຍເມືອງຕໍ່ເມືອງໃນແຂວງດຽວກັນ

- ບຸກຄົນ ຫລື ຄອບຄົວຜູ້ທີ່ຈະຍົກຍ້າຍຕ້ອງໄດ້ຂຽນຄໍາຮ້ອງຍື່ນຕໍ່ອົງການປົກຄອງບ້ານ ບ່ອນທີ່ຈະໄປຢູ່ໃໝ່ ເພື່ອຄົ້ນຄວ້າ ແລະ ສະເໜີຕໍ່ຫ້ອງການພາຍໃນເມືອງ ບ່ອນທີ່ຈະໄປຢູ່ໃໝ່ (ນັບແຕ່ວັນໄດ້ຮັບຄໍາຮ້ອງ);
- ຫຼັງຈາກໄດ້ຮັບເອກະສານຄໍາຮ້ອງຈາກອົງການປົກຄອງບ້ານແລ້ວ ຫ້ອງການພາຍໃນເມືອງຕ້ອງຄົ້ນຄ້ວາ ແລະ ມີຄໍາເຫັນ ແລ້ວນໍາສະເໜີໃຫ້ເຈົ້າເມືອງພິຈາລະນາຕົກລົງຮັບ ຫຼື ບໍ່ຮັບພາຍໃນ 05 ວັນ ລັດຖະການ(ນັບແຕ່ວັນໄດ້ ຮັບຄໍາຮ້ອງ);
- ເມື່ອໄດ້ຂໍ້ຕົກລົງຮັບເອົາຈາກເຈົ້າເມືອງບ່ອນທີ່ຈະໄປຢູ່ໃໝ່ແລ້ວ ຈຶ່ງມາປະກອບເອກະສານຂໍຍົກຍ້າຍຜ່ານບ້ານແລ້ວຍື່ນຕໍ່ຫ້ອງການພາຍໃນເມືອງບ່ອນຢູ່ເດີມ, ຫຼັງຈາກໄດ້ຮັບຂໍ້ຕົກລົງຍົກຍ້າຍຈາກເຈົ້າເມືອງບ່ອນຢູ່ເດີມແລ້ວ ກໍ່ສາມາດຍົກຍ້າຍໄດ້;
- ຫລັງຈາກບຸກຄົນ ຫລື ຄອບຄົວດັ່ງກ່າວຍົກຍ້າຍມາຢູ່ບ່ອນໃໝ່ແລ້ວ, ຫ້ອງການພາຍໃນເມືອງບ່ອນຢູ່ໃໝ່ ຕ້ອງແຈ້ງໃຫ້ ປກສ ເມືອງ ເພື່ອປ່ຽນແປງສໍາມະໂນຄົວ.

7.3 ການຍົກຍ້າຍແຂວງຕໍ່ແຂວງ

- ບຸກຄົນ ຫຼື ຄອບຄົວຜູ້ທີ່ຈະຍົກຍ້າຍ ຕ້ອງໄດ້ຂຽນຄໍາຮ້ອງຍື່ນຕໍ່ອົງການປົກຄອງບ້ານ, ແລ້ວໄປຫາຫ້ອງການພາຍໃນເມືອງບ່ອນທີ່ຈະໄປຢູ່ໃໝ່ ເພື່ອຄົ້ນຄວ້າ ແລະ ສະເໜີຕໍ່ພະແນກພາຍໃນແຂວງ ຫລື ນະຄອນຫລວງບ່ອນທີ່ຈະໄປຢູ່ໃໝ່ ພາຍໃນກໍານົດເວລາ 07 ວັນລັດຖະການ (ນັບແຕ່ວັນໄດ້ຮັບຄໍາຮ້ອງ);
- ຫຼັງຈາກໄດ້ຮັບເອກະສານຄໍາຮ້ອງຈາກຫ້ອງການພາຍໃນເມືອງແລ້ວ ພະແນກພາຍໃນແຂວງ ຫລື ນະຄອນຫລວງ ຄົ້ນຄ້ວາ ແລະ ມີຄໍາເຫັນແລ້ວນໍາສະເໜີໃຫ້ເຈົ້າແຂວງ ຫລື ເຈົ້າຄອງນະ

ຄອນຫລວງພິຈາລະນາຕົກລົງຮັບ ຫຼື ບໍ່ຮັບພາຍໃນ15 ວັນລັດຖະການ (ນັບແຕ່ວັນໄດ້ຮັບຄໍາຮ້ອງ);

- ເມື່ອໄດ້ຂໍ້ຕົກລົງຮັບເອົາຈາກເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງບ່ອນທີ່ຈະໄປຢູ່ໃໝ່ ແລ້ວຈຶ່ງມາປະກອບເອກະສານຂໍຍົກຍ້າຍຜ່ານບ້ານ, ຫ້ອງການພາຍໃນເມືອງແລ້ວຢືນຕໍ່ພະແນກພາຍໃນແຂວງ ຫລື ນະຄອນຫລວງບ່ອນຢູ່ເດີມ, ຫຼັງຈາກໄດ້ຂໍ້ຕົກລົງຈາກເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງບ່ອນຢູ່ເດີມແລ້ວກໍສາມາດຍົກຍ້າຍໄດ້;
- ພະແນກພາຍໃນແຂວງ ຫລື ນະຄອນຫລວງບ່ອນຢູ່ໃໝ່ ຕ້ອງແຈ້ງໃຫ້ ປກສ ແຂວງຊາບພາຍໃນກໍານົດເວລາ15 ວັນເພື່ອປ່ຽນແປງສໍາມະໂນຄົວ.

**ມາດຕາ 8. ການປະກອບເອກະສານຂໍຍົກຍ້າຍ**

**8.1. ເອກະສານທີ່ປະກອບໄປຫາບ້ານທີ່ຈະໄປຢູ່ໃໝ່ປະກອບມີ:**

- ໃບຄໍາຮ້ອງຂໍຍົກຍ້າຍ;
- ໃບຢັ້ງຢືນທີ່ຢູ່;
- ສໍາມະໂນຄົວ ແລະບັດປະຈໍາຕົວ;
- ຊີວະປະຫວັດ;
- ໃບແຈ້ງໂທດ;
- ໃບຢັ້ງຢືນສຸຂະພາບ;
- ຮູບຖ່າຍຂະໜາດ 3 x 4 ຈໍານວນ 6 ໃບ.
- ເອກະສານອື່ນໆທີ່ຢັ້ງຢືນເຫດຜົນຂໍຍົກຍ້າຍ.

**8.2. ເອກະສານທີ່ປະກອບໄປຫາບ້ານເດີມທີ່ຈະຂໍຍົກຍ້າຍປະກອບມີ:**

- ໃບຢັ້ງຢືນຮັບເອົາພົນລະເມືອງຂໍຍົກຍ້າຍຂອງນາຍບ້ານ, ຂໍ້ຕົກລົງຮັບເອົາພົນລະເມືອງຂໍຍົກຍ້າຍຂອງເຈົ້າເມືອງ, ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງ ບ່ອນທີ່ຈະໄປຢູ່ໃໝ່;
- ໃບອະນຸຍາດຍົກຍ້າຍຂອງນາຍບ້ານ, ຂໍ້ຕົກລົງອະນຸມັດຍົກຍ້າຍຂອງເຈົ້າເມືອງ ແລະ ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງບ່ອນຢູ່ເດີມ;

**ມາດຕາ 9. ການພິຈາລະນາການຍົກຍ້າຍ**

**9.1 ການຍົກຍ້າຍບ້ານຕໍ່ບ້ານໃນເມືອງດຽວກັນ:**

ອົງການປົກຄອງບ້ານເມື່ອໄດ້ຮັບເອກະສານຄໍາຮ້ອງຂໍຍົກຍ້າຍຂອງບຸກຄົນ ຫລື ຄອບຄົວ ແລ້ວຕ້ອງໄດ້ຄົ້ນຄ້ວາພິຈາລະນາ ແລະ ສົ່ງໃຫ້ ປກສ ບໍລິການປະຊາຊົນມີຄໍາເຫັນ, ຖ້າເຫັນວ່າເອກະສານຖືກຕ້ອງ ແລະ ຄົບຖ້ວນແລ້ວກໍຕ້ອງອອກໃບຢັ້ງຢືນຮັບເອົາ ຫລື ໃບອະຍາດຍົກຍ້າຍ ໃຫ້ຕາມລະບຽບການ ໃນກໍລະນີທີ່ເຫັນວ່າເອກະສານຄໍາຮ້ອງຂໍຍົກຍ້າຍນັ້ນ ຫາກບໍ່ຄົບຖ້ວນອົງການປົກຄອງບ້ານຕ້ອງສົ່ງເອກະສານຄໍາຮ້ອງດັ່ງກ່າວນັ້ນພ້ອມທັງຄໍາເຫັນໃຫ້ບຸກຄົນ ຫລື ຄອບຄົວຢ່າງເປັນລາຍລັກອັກສອນ.

9.2 ການຍົກຍ້າຍເມືອງຕໍ່ເມືອງໃນແຂວງດຽວກັນ:

ຫ້ອງການພາຍໃນເມືອງເມື່ອໄດ້ຮັບເອກະສານຄໍາຮ້ອງຂໍຍົກຍ້າຍຂອງບຸກຄົນ ຫລື ຄອບຄົວ ໂດຍຜ່ານຄໍາເຫັນຂອງອົງການປົກຄອງບ້ານແລ້ວ ຕ້ອງໄດ້ຄົ້ນຄ້ວາພິຈາລະນາ ແລະ ສົ່ງໃຫ້ ປກສ ເມືອງມີຄໍາເຫັນ ຖ້າເຫັນວ່າເອກະສານຖືກຕ້ອງ ແລະຄົບຖ້ວນແລ້ວ ຫ້ອງການພາຍໃນເມືອງ ຕ້ອງ ນໍາສະເໜີໃຫ້ເຈົ້າເມືອງພິຈາລະນາອອກຂໍ້ຕົກລົງຮັບເອົາ ຫລື ຂໍ້ຕົກລົງອະນຸມັດຍົກຍ້າຍໃຫ້ຕາມ ລະບຽບການ, ໃນກໍລະນີທີ່ເອກະສານຄໍາຮ້ອງຂໍຍົກຍ້າຍຫາກບໍ່ຄົບຖ້ວນ, ຫ້ອງການພາຍໃນເມືອງ ຕ້ອງສົ່ງເອກະສານດັ່ງກ່າວນັ້ນຄືນໃຫ້ອົງການປົກຄອງບ້ານຄົ້ນຄ້ວາຄືນໃໝ່ຕາມລະບຽບການ.

9.3 ການຍົກຍ້າຍແຂວງຕໍ່ແຂວງ:

ພະແນກພາຍໃນແຂວງ ຫລື ນະຄອນຫລວງ ເມື່ອໄດ້ຮັບເອກະສານຄໍາຮ້ອງຂໍຍົກຍ້າຍຂອງ ບຸກຄົນ ຫລື ຄອບຄົວ ໂດຍຜ່ານຄໍາເຫັນຂອງອົງການປົກຄອງບ້ານ ແລະ ຫ້ອງການພາຍໃນເມືອງ ແລ້ວ ຕ້ອງໄດ້ຄົ້ນຄ້ວາພິຈາລະນາ ແລະ ສົ່ງໃຫ້ປກສແຂວງມີຄໍາເຫັນ, ຖ້າເຫັນວ່າເອກະສານຖືກ ຕ້ອງ ແລະ ຄົບຖ້ວນແລ້ວຕ້ອງນໍາສະເໜີໃຫ້ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງ ພິຈາລະນາ ອອກຂໍ້ຕົກລົງຮັບເອົາ ຫລື ຂໍ້ຕົກລົງອະນຸມັດຍົກຍ້າຍໃຫ້ຕາມລະບຽບການ, ໃນກໍລະນີທີ່ເອກະ ສານຄໍາຮ້ອງຂໍຍົກຍ້າຍຫາກບໍ່ຄົບຖ້ວນພະແນກພາຍໃນແຂວງ ຫລື ນະຄອນຫລວງຕ້ອງສົ່ງເອກະ ສານ ດັ່ງກ່າວ ນັ້ນຄືນໃຫ້ຫ້ອງການພາຍໃນເມືອງ ເພື່ອຄົ້ນຄ້ວາຄືນໃໝ່ຕາມລະບຽບການ.

## ໝວດທີ 4
## ການຈົດທະບຽນ, ການລຶບລ້າງທະບຽນ ແລະ ການຮັກສາສໍານວນເອກະສານ

**ມາດຕາ 10. ການຈົດທະບຽນ**

ການຈົດທະບຽນມີ 03 ຂັ້ນຄື:

10.1 ການຈົດທະບຽນຍົກຍ້າຍ ລະຫວ່າງບ້ານຕໍ່ບ້ານພາຍໃນເມືອງດຽວກັນ ເມື່ອເອກະສານຄົບຖ້ວນ ຕາມລະບຽບການແລ້ວ ແມ່ນນາຍບ້ານເປັນຜູ້ປະຕິບັດຕາມລະບຽບຈົດທະບຽນພົນລະເມືອງ;

10.2 ການຈົດທະບຽນຍົກຍ້າຍລະຫວ່າງເມືອງ ຕໍ່ ເມືອງພາຍໃນແຂວງດຽວກັນ ເມື່ອເອກະສານຄົບ ຖ້ວນຕາມລະບຽບການ ແມ່ນຫ້ອງການພາຍໃນເມືອງເປັນຜູ້ປະຕິບັດຕາມລະບຽບຈົດທະບຽນ ພົນລະເມືອງ;

10.3 ການຈົດທະບຽນຍົກຍ້າຍລະຫວ່າງແຂວງ ຕໍ່ ແຂວງ ເມື່ອເອກະສານຄົບຖ້ວນຕາມລະບຽບການ ແມ່ນພະແນກພາຍໃນແຂວງ ເປັນຜູ້ປະຕິບັດຕາມລະບຽບຈົດທະບຽນພົນລະເມືອງ.

**ມາດຕາ 11. ການລຶບລ້າງທະບຽນ**

ການລຶບລ້າງການຈົດທະບຽນການຍົກຍ້າຍມີດັ່ງນີ້:

11.1 ບຸກຄົນ ຫຼື ຄອບຄົວ ທີ່ໄດ້ຍົກຍ້າຍໄປຢູ່ບ່ອນອື່ນ;

11.2 ການຈົດທະບຽນທີ່ບໍ່ຖືກຕ້ອງ, ບໍ່ຖືກເປົ້າໝາຍ ແລະ ບໍ່ຄົບຖ້ວນຕາມເງື່ອນໄຂຂອງການຍົກຍ້າຍ;

11.3 ໄດ້ຍົກຍ້າຍອອກໄປຕັ້ງພູມລຳເນົາຢູ່ຕ່າງປະເທດ;

11.4 ໄດ້ຈົດທະບຽນທີ່ຢູ່ອາໄສຢູ່ບ່ອນໃໝ່.

**ມາດຕາ 12. ການຮັກສາສຳນວນເອກະສານ**

12.1 ເກັບກຳ, ຮັກສາຂໍ້ມູນເອກະສານ ກ່ຽວກັບບ່ອນຢູ່ໃຫ້ຄົບຖ້ວນ;

12.2 ສະໜອງ, ແລກປ່ຽນຂໍ້ມູນສະຖິຕິ ໃຫ້ຖືກຕ້ອງຕາມຄວາມເປັນຈິງ;

12.3 ຕ້ານສະກັດກັ້ນບັນດາການກະທຳທີ່ສ້າງຄວາມສູນເສຍຕໍ່ຖານຂໍ້ມູນ ກ່ຽວກັບບ່ອນຢູ່ຂອງພົນລະເມືອງ.

## ໝວດທີ 5
## ໜ້າທີ່ ແລະ ຂອບເຂດສິດແຕ່ລະຂັ້ນ

**ມາດຕາ 13. ໜ້າທີ່ ແລະ ຂອບເຂດສິດຂອງກະຊວງພາຍໃນ**

13.1 ຄົ້ນຄ້ວານະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບການຄຸ້ມຄອງການຍົກຍ້າຍ ເພື່ອສະເໜີລັດຖະບານພິຈາລະນາ;

13.2 ຄົ້ນຄ້ວາຮ່າງ, ປັບປຸງນິຕິກຳ ແລະ ຈັດກອງປະຊຸມເຜີຍແຜ່ວຽກງານການຍົກຍ້າຍ ຂອງພົນລະເມືອງ;

13.3 ຄຸ້ມຄອງ, ຊຸກຍູ້ ແລະຕິດຕາມກວດກາ ການຈັດຕັ້ງປະຕິບັດການຍົກຍ້າຍຂອງພົນລະເມືອງ;

13.4 ຄົ້ນຄ້ວາແລະປະກອບຄຳເຫັນໃສ່ເອກະສານຕ່າງໆ ກ່ຽວກັບການຂໍຍົກຍ້າຍຂອງພົນລະເມືອງ

13.5 ສັງລວມ, ສະໜອງຂໍ້ມູນ ການຍົກຍ້າຍຂອງພົນລະເມືອງ ໃນຂອບເຂດທົ່ວປະເທດ;

13.6 ປະສານສົມທົບກັບພາກສ່ວນອື່ນ, ສະຫລຸບສັງລວມ, ຖອດຖອນບົດຮຽນ ແລະ ລາຍງານການຍົກຍ້າຍຂອງພົນລະເມືອງ ໃຫ້ລັດຖະບານເປັນປົກກະຕິ;

13.7 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 14. ໜ້າທີ່ ແລະ ຂອບເຂດສິດຂອງພະແນກພາຍໃນແຂວງ**

14.1 ຫັນເອົານະໂຍບາຍ, ແຜນການ ແລະ ມະຕິຕົກລົງຂອງກະຊວງພາຍໃນເປັນແຜນການ,ແຜນງານ ແລະ ໂຄງການລະອຽດຂອງຕົນ;

14.2 ແນະນຳ, ຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳ ກ່ຽວກັບການຍົກຍ້າຍທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

14.3 ຮັບ, ຄົ້ນຄ້ວາພິຈາລະນາເອກະສານຄຳຮ້ອງ ແລະ ນຳສະເໜີໃຫ້ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງ ອອກຂໍ້ຕົກລົງຮັບເອົາ ຫລື ອະນຸມັດ ຍົກຍ້າຍຂອງພົນລະເມືອງ;

14.4 ຄົ້ນຄ້ວາປະກອບຄຳເຫັນໃສ່ເອກະສານ ແລະ ຄຳສະເໜີຕ່າງໆ ກ່ຽວກັບການຂໍຍົກຍ້າຍ ຂອງພົນລະເມືອງ ທີ່ຫ້ອງການພາຍໃນເມືອງ ແລະ ພາກສ່ວນອື່ນສະເໜີມາ;

14.5 ຄຸ້ມຄອງ, ຊຸກຍູ້ ແລະຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານການຍົກຍ້າຍຂອງຫ້ອງການພາຍໃນເມືອງ;

14.6 ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງກັບວຽກງານການຍົກຍ້າຍຂອງພົນລະເມືອງ;

14.7 ສະຫລຸບສັງລວມ, ສະໜອງຂໍ້ມູນການຍົກຍ້າຍຂອງພົນລະເມືອງທີ່ຢູ່ພາຍໃນແຂວງຂອງຕົນເພື່ອລາຍງານໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ແລະ ລັດຖະມົນຕີວ່າການກະຊວງພາຍໃນ;

14.8 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 15. ໜ້າທີ່ ແລະ ຂອບເຂດສິດຂອງຫ້ອງການພາຍໃນເມືອງ

15.1 ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບການຄຸ້ມຄອງການຍົກຍ້າຍຂອງພົນລະເມືອງ;

15.2 ຮັບ, ຄົ້ນຄ້ວາພິຈາລະນາເອກະສານຄຳຮ້ອງ ແລະ ນຳສະເໜີໃຫ້ເຈົ້າເມືອງ ອອກຂໍ້ຕົກລົງຮັບ, ເອົາ ຫລື ອະນຸມັດ ຍົກຍ້າຍຂອງພົນລະເມືອງ;

15.3 ຄົ້ນຄ້ວາປະກອບຄຳເຫັນຕໍ່ເອກະສານ ແລະ ຄຳສະເໜີຕ່າງໆ ກ່ຽວກັບການຂໍຍົກຍ້າຍທີ່ອົງການປົກ ຄອງບ້ານ ແລະ ພາກສ່ວນອື່ນສະເໜີມາ;

15.4 ແນະນຳ, ຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານການຍົກຍ້າຍຂອງອົງການປົກຄອງບ້ານ;

15.5 ປະສານສົມທົບກັບພາກສ່ວນອື່ນ ທີ່ກ່ຽວຂ້ອງກັບວຽກງານການຍົກຍ້າຍຂອງພົນລະເມືອງ;

15.6 ສະຫລຸບ, ສັງລວມ ແລະ ສະໜອງຂໍ້ມູນການຍົກຍ້າຍຂອງພົນລະເມືອງຢູ່ຂັ້ນເມືອງ ແລະ ລາຍງານສະພາບການຍົກຍ້າຍຂອງພົນລະເມືອງ ໃຫ້ເຈົ້າເມືອງ ແລະ ຂັ້ນເທິງເປັນປົກກະຕິ;

15.7 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 16. ໜ້າທີ່ ແລະ ຂອບເຂດສິດຂອງອົງການປົກຄອງບ້ານ

16.1 ຈັດຕັ້ງປະຕິບັດຕາມກົດໝາຍ, ມະຕິຄຳສັ່ງ ແລະ ລະບຽບຫລັກການ ກ່ຽວກັບການຍົກຍ້າຍຂອງພົນລະເມືອງ ຂອງຂັ້ນເທິງວາງອອກ;

16.2 ຮັບ, ຄົ້ນຄ້ວາເອກະສານຄຳຮ້ອງ, ອອກໃບຢັ້ງຢືນຮັບເອົາ ຫລື ອະນຸຍາດຍົກຍ້າຍ ຂອງພົນລະເມືອງ ລະຫວ່າງບ້ານຕໍ່ບ້ານ;

16.3 ລາຍງານ ແລະ ສະເໜີຂໍຄຳເຫັນນຳຫ້ອງການພາຍໃນເມືອງກ່ຽວກັບວຽກງານການຍົກຍ້າຍ;

16.4 ສະຫລຸບ, ລາຍງານການຄຸ້ມຄອງ ແລະ ເກັບກຳສະຖິຕິ ການຍົກຍ້າຍຂອງພົນລະເມືອງທີ່ຢູ່ພາຍໃນບ້ານຂອງຕົນ ແລະລາຍງານໃຫ້ຫ້ອງການພາຍໃນເມືອງເປັນປົກກະຕິ;

16.5 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

# ໝວດທີ 6
# ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ
# ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 17. ຂໍ້ຫ້າມສຳລັບພະນັກງານ**

17.1 ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ອອກໃບອະນຸມັດໃຫ້ບຸກຄົນ ຫຼື ຄອບຄົວຍົກຍ້າຍ ເພື່ອຫາຜົນປະໂຫຍດສ່ວນຕົວໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

17.2 ຫ້າມກົດໜ່ວງຖ່ວງດຶງແກ່ຍາວເອກະສານຄຳຮ້ອງຂໍຍົກຍ້າຍຂອງພົນລະເມືອງ;

17.3 ຫ້າມທຳລາຍເອກະສານຂອງການຍົກຍ້າຍ;

17.4 ຫ້າມຮັບ ຫລື ທວງເອົາສິນບົນນຳບຸກຄົນ ຫລື ຄອບຄົວ ທີ່ຂໍການຍົກຍ້າຍ;

17.5 ຫ້າມເກັບ ແລະ ນຳໃຊ້ຄ່າທຳນຽມໃນການຈັດທະບຽນການຍົກຍ້າຍພົນລະເມືອງ ທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ.

**ມາດຕາ 18. ຂໍ້ຫ້າມສຳລັບບຸກຄົນ ຫລື ຄອບຄົວ**

18.1 ຫ້າມບຸກຄົນ ຫລື ຄອບຄົວຍົກຍ້າຍໄປຢູ່ບ່ອນອື່ນ ໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

18.2 ຫ້າມຍົກຍ້າຍໄປເພື່ອເຄື່ອນໄຫວກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍ ຂອງສັງຄົມ;

18.3 ຫ້າມໃຫ້ສິນບົນ ຫລື ຜົນປະໂຫຍດອື່ນແກ່ພະນັກງານ;

18.4 ຫ້າມສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ປອມແປງເອກະສານເພື່ອຍົກຍ້າຍໄປໂດຍບໍ່ຖືກຕ້ອງຕາມລະບຽບກົດໝາຍ;

18.5 ຫ້າມຈັດຕັ້ງ, ປຸກລະດົມ, ຊັກຊວນຊ່ວຍ ຫລືອຜູ້ອື່ນລະເມີດລະບຽບກົດໝາຍ ກ່ຽວກັບການຍົກຍ້າຍ.

**ມາດຕາ 19. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ຄອບຄົວທີ່ມີຜົນງານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບຫລັກການ.

**ມາດຕາ 20. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ຄອບຄົວທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເປັນຕົ້ນຂໍ້ມູນທີ່ບໍ່ຖືກຕ້ອງ, ປອມແປງເອກະສານ, ຮັບສິນບົນ, ໃຫ້ສິນບົນ ຫລື ມີການກະທຳອື່ນຈະຖືກສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫລື ດຳເນີນຄະດີ ຕາມລະບຽບກົດໝາຍ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 21. ການຈັດຕັ້ງປະຕິບັດ**

21.1 ກະຊວງພາຍໃນ ຊີ້ນຳ, ຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

21.2 ພະແນກພາຍໃນແຂວງ, ຫ້ອງການພາຍໃນເມືອງ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;

21.3 ທຸກພາກສ່ວນທີ່ກ່ຽວຂ້ອງກັບການຍົກຍ້າຍຂອງພົນລະເມືອງ ຈົ່ງປະສານງານ ແລະ ໃຫ້ການຮ່ວມມືກັນປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີຜົນສຳເລັດ.

**ມາດຕາ 22. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງພາຍໃນ**

ຄຳປານ ພິລາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ໃບຄຳຮ້ອງ

**ຮຽນ:** ທ່ານນາຍບ້ານ..........................................................................................

(ໂດຍຜ່ານນາຍບ້ານເດີມ)

**ເລື່ອງ:** ຂໍຍົກຍ້າຍ

- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ..........................................................................................................

ຂ້າພະເຈົ້າຊື່ ແລະ ນາມສະກຸນ......................................ວັນ,ເດືອນ,ປີເກີດ........./......./.........
ເຊື້ອຊາດ...................ສັນຊາດ.....................ຊົນເຜົ່າ.......................ສາສະໜາ.......................
ອາຊີບ....................ປັດຈຸບັນຢູ່ໜ່ວຍ............ບ້ານ............................ເມືອງ............................
ແຂວງ.................................ສຳມະໂນຄົວເລກທີ...........ລົງວັນທີ......./......./...........ບັດປະຈຳຕົວ
ເລກທີ............................ລົງວັນທີ......../......./...........ເບີໂທລະສັບ..........................ພ້ອມດ້ວຍ
ສະມາຊິກຄອບຄົວຈຳນວນ...........ຄົນ, ຍິງ...........ຄົນ, ຊາຍ...........ຄົນ, ປະກອບມີລາຍຊື່ດັ່ງນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ເພດ | ວັນ,ເດືອນ,ປີເກີດ | ສາຍພົວພັນກັບຕົນເອງ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................

ເມືອງ.............................

ບ້ານ.............................

ເລກທີ........../...........

ວັນທີ........./........../............

ຮູບ 3x4

# ໃບຢັ້ງຢືນທີ່ຢູ່

ນາຍບ້ານໆ..................................ເມືອງ................................ແຂວງ..................................

ຂໍຢັ້ງຢືນວ່າ ທ້າວ ຫຼື ນາງ..............................ວັນ,ເດືອນ,ປີເກີດ........./......./...........ເຊື້ອຊາດ............

ສັນຊາດ....................ສາສະໜາ..................ຊົນເຜົ່າ..................ອາຊີບ........................ບັດປະຈຳຕົວ

ເລກທີ........................................ປັດຈຸບັນຢູ່ ເຮືອນເລກທີ.............ໜ່ວຍທີ...........ບ້ານ.....................

ເບີໂທລະສັບ......................................ສຳມະໂນຄົວເລກທີ..............ລົງວັນທີ......../......../............

ເປັນລູກຂອງ ທ້າວ.........................................ແລະ ນາງ...........................................ປັດຈຸບັນຢູ່

ບ້ານ..........................................ເມືອງ......................................ແຂວງ........................................

ຊຶ່ງຜູ້ກ່ຽວຢູ່ໃນຄວາມຮັບຜິດຊອບຂອງອົງການປົກຄອງບ້ານຂອງພວກເຮົາຢ່າງແທ້ຈິງ.

ໃບຢັ້ງຢືນສະບັບນີ້ໃຊ້ໄດ້ພາຍໃນກຳນົດເວລາ 3 ເດືອນ.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໃຫ້ຜູ້ກ່ຽວໄວ້ເປັນຫຼັກຖານ.

ນາຍບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຊີວະປະຫວັດຫຍໍ້

## 1. ສະພາບຕົນເອງ

ຊື່ ແລະ ນາມສະກຸນ..........................................................ວັນ,ເດືອນ,ປີເກີດ........./......./..........

ບ້ານເກີດ..........................................ເມືອງ..................................ແຂວງ....................................

ເຊື້ອຊາດ..............................ສັນຊາດ.........................ຊົນເຜົ່າ.....................ສາສະໜາ....................

ລະດັບການສຶກສາສາມັນ..........................................ວິຊາສະເພາະ..............................................

ຊັ້ນວິຊາສະເພາະ.....................................................ອາຊີບປັດຈຸບັນ...........................................

ບ່ອນປະຈຳການ.......................................................ໜ້າທີ່ຮັບຜິດຊອບ..........................................

ວັນ,ເດືອນ,ປີ ສັງກັດລັດ.............../............/.................ປັດຈຸບັນຢູ່ໜ່ວຍ.........................................

ບ້ານ.................................ເມືອງ.........................................ແຂວງ.........................................

## 2. ການເຄື່ອນໄຫວຂອງຕົນເອງແຕ່ລະໄລຍະ ( ອາຍຸ 8 ປີ ເຖິງປັດຈຸບັນ )

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

..........................................................................................................................................

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.............................

ເມືອງ.............................

ບ້ານ.............................

ເລກທີ........../...........

ວັນທີ........./........../............

# ໃບອະນຸຍາດຍົກຍ້າຍພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ຄຳຮ້ອງຂໍຂອງ ທ້າວ ຫຼື ນາງ.......................................ສະບັບລົງວັນທີ......../......./..........
- ອີງຕາມ ໃບຢັ້ງຢືນຮັບເອົາພົນລະເມືອງຂໍຍົກຍ້າຍຂອງບ້ານ ສະບັບເລກທີ...../......ລົງວັນທີ...../...../.......

## ນາຍບ້ານອະນຸຍາດ

ເຫັນດີອະນຸຍາດໃຫ້ ທ້າວ ຫຼື ນາງ.......................................ວັນ,ເດືອນ,ປີເກີດ......./....../.........
ອາຊີບ.....................ທີ່ຢູ່ປັດຈຸບັນໜ່ວຍ.........ບ້ານ.............................ເມືອງ...............................
ແຂວງ.............................ສຳມະໂນຄົວເລກທີ.............ລົງວັນທີ......./......./.......... ບັດປະຈຳຕົວເລກທີ.........................ລົງວັນທີ......../....../..........ເບີໂທລະສັບ............................ພ້ອມດ້ວຍສະມາຊິກຄອບຄົວຈຳນວນ...........ຄົນ, ຍິງ.........ຄົນ, ຊາຍ..........ຄົນ, ຍົກຍ້າຍໄປຢູ່ບ້ານ..............................
ເມືອງ...................................ແຂວງ.................................... ປະກອບມີລາຍຊື່ດັ່ງນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ວັນ,ເດືອນ,ປີເກີດ | ສາຍພົວພັນຄອບຄົວ | ໝາຍເຫດ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |

ດັ່ງນັ້ນ, ຈຶ່ງອອກໃບອະນຸຍາດສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືແກ່ຜູ້ກ່ຽວດ້ວຍ.

ນາຍບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ............................

ເມືອງ............................

ບ້ານ............................ ເລກທີ........../...........

ວັນທີ........./........../............

# ໃບຢັ້ງຢືນ

## ຮັບເອົາພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ຄຳຮ້ອງຂອງທ້າວ ຫຼື ນາງ ......................................ສະບັບລົງວັນທີ......./......./...........
- ອີງຕາມ ການຕົກລົງເຫັນດີຂອງອົງການປົກຄອງບ້ານ.............................ຄັ້ງວັນທີ......./......./.........

**ນາຍບ້ານຢັ້ງຢືນ**

ຮັບເອົາ ທ້າວ ຫຼື ນາງ...................................................................ປັດຈຸບັນຜູ້ກ່ຽວຢູ່ໜ່ວຍ..........

ບ້ານ.....................................ເມືອງ.....................................ແຂວງ.......................................

ສຳມະໂນຄົວເລກທີ...............ລົງວັນທີ........./......../..........ບັດປະຈຳຕົວເລກທີ..............................

ລົງວັນທີ.........../........./............ເບີໂທລະສັບ..............................................ພ້ອມດ້ວຍສະມາຊິກ

ຄອບຄົວຈຳນວນ................ຄົນ, ຍິງ..............ຄົນ, ຊາຍ...............ຄົນ.

ຍົກຍ້າຍມາຢູ່ບ້ານ...............................ເມືອງ............................ແຂວງ...........................

ເຫດຜົນຂອງການຍົກຍ້າຍມາຢູ່ຍ້ອນ: ..........................................................................................

.............................................................................................................................................

ບຸກຄົນ ຫຼື ຄອບຄົວຜູ້ທີ່ຂໍຍົກຍ້າຍຕ້ອງປະກອບເອກະສານໃຫ້ຖືກຕ້ອງ ແລະ ຄົບຖ້ວນແລ້ວດຳເນີນການຂໍອະນຸຍາດຕາມຂັ້ນຕອນທີ່ລະບຽບກົດໝາຍກຳນົດໄວ້.

ດັ່ງນັ້ນ, ຈຶ່ງອອກໃບຢັ້ງຢືນສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການປະກອບເອກະສານຍົກຍ້າຍ, ໃບຢັ້ງຢືນສະບັບນີ້ມີອາຍຸການນຳໃຊ້ພາຍໃນກຳນົດ 6 ເດືອນ.

ນາຍບ້ານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ....................................

ເມືອງ ................................. ເລກທີ........./............

ວັນທີ............/.........../.............

# ຂໍ້ຕົກລົງ

## ວ່າດ້ວຍການຮັບເອົາພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ໃບສະເໜີຂອງຫ້ອງການພາຍໃນເມືອງສະບັບເລກທີ......./........ລົງວັນທີ........./........./.........

### ເຈົ້າເມືອງຕົກລົງ:

**ມາດຕາ 1.** ເຫັນດີຮັບເອົາທ້າວ ຫຼື ນາງ.....................................................ປັດຈຸບັນຜູ່ກ່ຽວຢູ່ໜ່ວຍ.......
ບ້ານ....................................ເມືອງ.................................ແຂວງ..................................
ສຳມະໂນຄົວເລກທີ........ລົງວັນທີ......../........../.........ບັດປະຈຳຕົວເລກທີ..................................
ລົງວັນທີ.........../.........../...........ເບີໂທລະສັບ..............................................ພ້ອມດ້ວຍສະມາຊິກ
ຄອບຄົວຈຳນວນ................ຄົນ, ຍິງ..............ຄົນ, ຊາຍ..............ຄົນ.

ມີຈຸດປະສົງຂໍຍົກຍ້າຍມາຢູ່ບ້ານ.......................ເມືອງ...................ແຂວງ..........................

ເຫດຜົນຂອງການຂໍຍົກຍ້າຍມາຢູ່ຍ້ອນ:.................................................................................
...............................................................................................................................
...............................................................................................................................

**ມາດຕາ 2.** ບຸກຄົນ ຫຼື ຄອບຄົວທີ່ຂໍຍົກຍ້າຍຕ້ອງປະກອບເອກະສານໃຫ້ຖືກຕ້ອງ ແລະຄົບຖ້ວນແລ້ວດຳເນີນການຂໍອະນຸຍາດຕາມຂັ້ນຕອນທີ່ລະບຽບກົດໝາຍກຳນົດໄວ້.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີອາຍຸການນຳໃຊ້ພາຍໃນກຳນົດ 6 ເດືອນ ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ............................ ເລກທີ........./..........

ວັນທີ.........../.........../............

# ຂໍ້ຕົກລົງ

## ວ່າດ້ວຍການຮັບເອົາພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ໃບສະເໜີຂອງພະແນກພາຍໃນແຂວງ ສະບັບເລກທີ......./.......ລົງວັນທີ......./........../.........

## ເຈົ້າແຂວງຕົກລົງ:

**ມາດຕາ 1.** ເຫັນດີຮັບເອົາທ້າວ ຫຼື ນາງ.......................................ປັດຈຸບັນຜູ່ກ່ຽວຢູ່ໜ່ວຍ........ ບ້ານ.................................ເມືອງ..............................ແຂວງ.................................... ສຳມະໂນຄົວເລກທີ..........ລົງວັນທີ......../........./.........ບັດປະຈຳຕົວເລກທີ................................. ລົງວັນທີ........../.........../...........ເບີໂທລະສັບ.........................................ພ້ອມດ້ວຍສະມາຊິກ ຄອບຄົວຈຳນວນ................ຄົນ, ຍິງ..............ຄົນ, ຊາຍ.............ຄົນ.

ມີຈຸດປະສົງຂໍຍົກຍ້າຍມາຢູ່ບ້ານ.......................ເມືອງ....................ແຂວງ......................

ເຫດຜົນຂອງການຍົກຍ້າຍມາຢູ່ຍ້ອນ:..........................................................................

..........................................................................................................................

..........................................................................................................................

**ມາດຕາ 2.** ບຸກຄົນ ຫຼື ຄອບຄົວທີ່ຂໍຍົກຍ້າຍຕ້ອງປະກອບເອກະສານໃຫ້ຖືກຕ້ອງ ແລະຄົບຖ້ວນແລ້ວດຳເນີນການຂໍອະນຸຍາດຕາມຂັ້ນຕອນທີ່ລະບຽບກົດໝາຍກຳນົດໄວ້.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີອາຍຸການນຳໃຊ້ພາຍໃນກຳນົດ 6 ເດືອນ ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ...................................

ເມືອງ ......................................                                    ເລກທີ........../..........

ວັນທີ........./.........../...........

# ຂໍ້ຕົກລົງ

## ວ່າດ້ວຍອະນຸມັດການຍົກຍ້າຍພົນລະເມືອງ

- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍ ທະບຽນຄອບຄົວ ສະບັບເລກທີ 12/ສພຊ, ລົງວັນທີ 27 ພະຈິກ 2009.
- ອີງຕາມ ຂໍ້ຕົກລົງ ຮັບເອົາພົນລະເມືອງຂໍຍົກຍ້າຍຂອງເຈົ້າເມືອງ.................................................................... ສະບັບເລກທີ........../..........ລົງວັນທີ........./............./............
- ອີງຕາມ ໃບສະເໜີຂອງຫ້ອງການພາຍໃນເມືອງ ສະບັບເລກທີ........./.........ລົງວັນທີ........./.........../...........

**ເຈົ້າເມືອງຕົກລົງ:**

**ມາດຕາ 1.** ເຫັນດີໃຫ້ ທ້າວ ຫຼື ນາງ.............................................ວັນ,ເດືອນ,ປີເກີດ......./........./........ ອາຊີບ...............................ທີ່ຢູ່ປັດຈຸບັນໜ່ວຍ.........ບ້ານ.............................ເມືອງ............................ ແຂວງ...............................ສຳມະໂນຄົວເລກທີ..............ລົງວັນທີ.........../.........../........... ບັດປະຈຳຕົວ ເລກທີ.........................ລົງວັນທີ........./......../........ເບີໂທລະສັບ...............................ພ້ອມດ້ວຍສະມາຊິກ ຄອບຄົວຈຳນວນ..............ຄົນ, ຍິງ............ຄົນ, ຊາຍ............ຄົນ, ຍົກຍ້າຍໄປຢູ່ບ້ານ............................. ເມືອງ.......................................ແຂວງ............................................. ປະກອບມີລາຍຊື່ດັ່ງນີ້:

| ລ/ດ | ຊື່ ແລະ ນາມສະກຸນ | ວັນ,ເດືອນ,ປີເກີດ | ສາຍພົວພັນຄອບຄົວ | ໝາຍເຫດ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |

**ມາດຕາ 2.** ໃຫ້ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືແກ່ຜູ້ກ່ຽວດ້ວຍ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງ